ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ: 002 /ທຄຕລ ...2021.......
ນະຄອນຫຼວງວຽງຈັນ, ວັນທີ: .......11 JUN 2021.......

# ໜັງສືລາຍງານ

ຮຽນ: ທ່ານຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ;
ທ່ານຜູ້ອໍານວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈໍາກັດ;
ຜູ້ຖືຮຸ້ນ ທຄຕລ.

ເລື່ອງ: ແຈ້ງມະຕິສໍາຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ທຄຕລ ຄັ້ງວັນທີ 10/06/2021 ກ່ຽວກັບ ການຍົກຍ້າຍ ແລະ ການແຕ່ງຕັ້ງຜູ້ບໍລິຫານຂັ້ນສູງຂອງ ທຄຕລ.

- ອີງຕາມມະຕິກອງປະຊຸມສະພາບໍລິຫານສະໄໝວິສາມັນ ທຄຕລ ເລກທີ 15/ສພທ ລົງວັນທີ 10/06/2021;

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຊາບມະຕິສໍາຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ທຄຕລ ຄັ້ງວັນທີ 10/06/2021 ກ່ຽວກັບ ການຍົກຍ້າຍ ແລະ ການແຕ່ງຕັ້ງຜູ້ບໍລິຫານຂັ້ນສູງຂອງ ທຄຕລ ດັ່ງນີ້:

1. ຮັບຮອງການຍົກຍ້າຍ ທ່ານ ພູຊົງ ຈັນທະຈັກ ຜູ້ອໍານວຍການ ທຄຕລ ໄປຮັບໜ້າທີ່ໃໝ່ຢູ່ ທະນາຄານແຫ່ງ ສປປ ລາວ (ທຫລ);
2. ຮັບຮອງການແຕ່ງຕັ້ງ ທ່ານ ຄໍາພູດ ສິດທິລາດ ເປັນຜູ້ອໍານວຍການ ທຄຕລ (ຊີວະປະຫວັດຫຍໍ້ຕາມເອກະສານຄັດຕິດມາພ້ອມນີ້);
3. ການຍົກຍ້າຍ ແລະ ການແຕ່ງຕັ້ງຂ້າງເທິງ ມີຜົນສັກສິດ ນັບແຕ່ວັນທີ 15/06/2021 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງຂໍລາຍງານມາຍັງທ່ານເພື່ອຊາບດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ

**ຮອງຜູ້ອໍານວຍການ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນາລິນ ສີລະວົງສິດ**



# ທ່ານ ຄຳພຸດ ສິດທິລາດ

ຜູ້ອຳນວຍການ

**ຊີວະປະຫວັດຫຍໍ້:**

ວັນເດືອນປີເກີດ: 28/04/1965

ສັນຊາດ: ລາວ

ພາສາ: ອັງກິດ, ລັດເຊຍ

ຕຳແໜ່ງ: ຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

## ປະຫວັດການສຶກສາ:

- ປີ 2009: ຊັ້ນສູງທິດສະດີການເມືອງ-ການປົກຄອງຈາກສະຖາບັນການເມືອງ-ການປົກຄອງແຫ່ງຊາດ;
- 1997-1998: ປະລິນຍາໂທດ້ານເສດຖະສາດ ຈາກປະເທດຍີ່ປຸ່ນ;
- 1987-1993: ປະລິນຍາໂທດ້ານເສດຖະສາດ, ການເງິນ ແລະ ສິນເຊື່ອ (ໃບປະກາດແດງ) ຈາກປະເທດລັດເຊຍ.

## ປະຫວັດການເຮັດວຽກ:

- 2021 ຮອດປັດຈຸບັນ: ຖືກແຕ່ງຕັ້ງເປັນຜູ້ອຳນວຍການໃຫຍ່ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
- 2012-2021: ຖືກແຕ່ງຕັ້ງເປັນຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ;
- 2010-2012: ຖືກແຕ່ງຕັ້ງເປັນຮັກສາການຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ;
- 2007-2010: ຖືກແຕ່ງຕັ້ງເປັນຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ;
- 2005-2007: ຖືກແຕ່ງຕັ້ງເປັນທີ່ປຶກສາຢູ່ຫ້ອງການກຸ່ມອາຊີຕາເວັນອອກສຽງໃຕ້ ຂອງກອງທຶນການເງິນສາກົນ, ປະເທດສະຫະລັດອາເມລິກາ;
- 2000-2005: ຖືກແຕ່ງຕັ້ງເປັນຮອງຫົວໜ້າກົມຄົ້ນຄວ້າເສດຖະກິດ, ທະນາຄານແຫ່ງ ສປປ ລາວ;
- 1999-2000: ຖືກແຕ່ງຕັ້ງເປັນຫົວໜ້າພະແນກຄົ້ນຄວ້າເສດຖະກິດຕ່າງປະເທດ ກົມຄົ້ນຄວ້າເສດຖະກິດ, ທະນາຄານແຫ່ງ ສປປ ລາວ;
- 1993-1999: ເປັນວິຊາການຢູ່ກົມຄົ້ນຄວ້າເສດຖະກິດ (ກົມນະໂຍບາຍເງິນຕາ) ທະນາຄານແຫ່ງ ສປປ ລາວ;
- 1983-1985: ເປັນວິຊາການບັນຊີຢູ່ທະນາຄານແຫ່ງລັດ ສາຂາຫຼວງພະບາງ.